ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 269/ນຍ

ນະຄອນຫຼວງວຽງຈັນ, ວັນທີ 17.11.2006

# ດຳລັດ
# ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 27/ສພຊ, ລົງວັນທີ 06 ພຶດສະພາ 2003 ;
- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003 ;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 05/94, ລົງວັນທີ 18 ກໍລະກົດ 1994 ;
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1993/ກງ, ລົງວັນທີ 7 ກັນຍາ 2006 ;

## ນາຍົກລັດຖະມົນຕີ ອອກດຳລັດ

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການລວມ ເພື່ອເປັນພື້ນຖານໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການນຳໃຊ້ງົບປະມານຂອງລັດ, ແຫລ່ງທຶນ ແລະ ຊັບສິນຂອງລັດ ລວມທັງໃຫ້ວິສາຫະກິດຂອງລັດ, ເອກະຊົນ ແລະ ປະຊາຊົນບັນດາເຜົ່າ ພ້ອມກັນປະຢັດໃນການຊົມໃຊ້ ໂດຍສະເພາະແມ່ນການຊົມໃຊ້ທີ່ມີລັກສະນະຟຸມເຟືອຍ ເພື່ອປະຢັດ ແລະ ສະສົມທຶນ ເຂົ້າໃນການພັດທະນາ.

### ມາດຕາ 2. ຄຳນິຍາມຄຳສັບ

2.1. ***ການປະຢັດ*** ແມ່ນການນຳໃຊ້ແຫຼ່ງຊັບພະຍາກອນດ້ານການເງິນ, ແຮງງານ ແລະ ແຫຼ່ງຊັບພະຍາກອນທຳມະຊາດອື່ນໆ ຢູ່ໃນອັດຕາທີ່ຕ່ຳກ່ວາກຳນົດໝາຍ, ມາດຕະຖານ ແລະ ລະດັບທີ່ໄດ້ກຳນົດໄວ້, ແຕ່ກໍ່ຍັງສາມາດເຮັດໃຫ້ວຽກງານບັນລຸໄດ້ຕາມເປົ້າໝາຍ ຫຼື ໃນກໍລະນີປະຕິບັດຕາມກຳນົດໝາຍ,

ມາດຕະຖານ ແລະ ລະດັບທີ່ໄດ້ກຳນົດໄວ້, ແຕ່ກໍ່ສາມາດຮັບປະກັນໝາກຜົນທີ່ສູງກວ່າເປົ້າໝາຍທີ່ໄດ້ກຳນົດໄວ້.

2.2. ***ການຟູມເຟືອຍ*** ແມ່ນການນຳໃຊ້ແຫຼ່ງຊັບພະຍາກອນ, ກຳລັງທາງດ້ານການເງິນ, ແຮງງານ ແລະ ແຫຼ່ງຊັບພະຍາກອນ, ກຳລັງງານອື່ນໆ ເກີນກ່ວາກຳນົດໝາຍ, ມາດຕະຖານ, ລະດັບ ເຊິ່ງອົງການຈັດຕັ້ງຂອງລັດທີ່ມີສິດອຳນາດໄດ້ກຳນົດໄວ້ ຫຼື ໃນກໍລະນີປະຕິບັດການນຳໃຊ້ຢ່າງຖືກຕ້ອງຕາມກຳນົດໝາຍ, ມາດຕະຖານ ແລະ ລະດັບທີ່ໄດ້ກຳນົດ, ແຕ່ຄຸນນະພາບທີ່ໄດ້ຮັບພັດຕໍ່າກ່ວາ ຫຼື ບໍ່ໄດ້ຕາມລະດັບຄາດໝາຍທີ່ໄດ້ກຳນົດໄວ້.

2.3. ***ລາຍຈ່າຍງົບປະມານຂອງລັດ*** ແມ່ນຈຳນວນເງິນຈາກງົບປະມານແຫ່ງລັດ ທີ່ໄດ້ຖືກຈັດສັນເອົາມານຳໃຊ້ເຂົ້າໃນບັນດາໜ້າທີ່ວຽກງານ ແລະ ເປົ້າໝາຍຕ່າງໆ ຕາມທີ່ໄດ້ກຳນົດໄວ້ຢູ່ໃນແຜນງົບປະມານແຫ່ງລັດ ຊຶ່ງສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວ, ໂດຍແມ່ນອົງການຈັດຕັ້ງຂອງລັດ ທີ່ມີສິດອຳນາດເປັນຜູ້ອະນຸມັດເບີກຈ່າຍ.

2.4. ***ທຶນ ແລະ ຊັບສິນຂອງລັດ*** ລວມມີທຶນ, ລາຍຈ່າຍງົບປະມານທີ່ລັດສະໜອງໃຫ້, ທຶນທີ່ມີແຫຼ່ງກຳເນີດມາຈາກງົບປະມານຂອງລັດ, ຊັບສິນທີ່ເກີດຈາກແຫຼ່ງທຶນຂອງງົບປະມານຂອງລັດ, ທຶນສິນເຊື່ອຂອງລັດ, ບັນດາບ້ວງເງິນຊ່ວຍເຫຼືອຈາກຕ່າງປະເທດ, ແຫຼ່ງທຶນສົມທົບຂອງປະຊາຊົນ, ທີ່ດິນ, ເຮືອນ, ບັນດາກິດຈະການສະຖາປັດຕິຍະກຳ (ການອອກແບບ) ອື່ນໆ ທີ່ຂຶ້ນກັບການຄຸ້ມຄອງຂອງລັດ, ຊັບພະຍາກອນ ທຳມະຊາດ, ບ້ວງເງິນສະໜັບສະໜູນຂອງບັນດາອົງການຈັດຕັ້ງ ແລະ ບຸກຄົນຢູ່ພາຍໃນ ແລະ ຕ່າງປະເທດ.

2.5. ***ຄັງທີ່ບໍ່ໄດ້ອະນຸຍາດໃຫ້ສ້າງຕັ້ງ*** ແມ່ນຄັງທີ່ສ້າງຕັ້ງຂຶ້ນໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ, ຂໍ້ກຳນົດຂອງລັດຖະບານ ເພື່ອຮັບໃຊ້ຈຸດປະສົງສະເພາະຂອງ ອົງການຈັດຕັ້ງ ຫຼື ບຸກຄົນຈຳນວນໜຶ່ງ ແລະ ແມ່ນຄັງທີ່ຫຼີກລ້ຽງການຕິດຕາມກວດກາ ຈາກອົງການຈັດຕັ້ງຂອງລັດ ທີ່ມີສິດອຳນາດ.

2.6. ***ອົງການຈັດຕັ້ງ*** ລວມມີອົງການຂອງລັດ, ຫົວໜ່ວຍວິຊາສະເພາະ, ຫົວໜ່ວຍກຳລັງປະກອບອາວຸດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສະມາຄົມວິຊາຊີບ-ວິຊາສະເພາະ, ລັດວິສາຫະກິດ ແລະ ບັນດາອົງການຈັດຕັ້ງເສດຖະກິດອື່ນໆ.

## ໝວດທີ II
## ການປະຢັດ ແລະ ຕ້ານການຟູມເຟືອຍ ໃນອົງການບໍລິຫານຂອງລັດ

### ມາດຕາ 3. ການສ້າງຕັ້ງໃໝ່, ການຮ່ວມຕົວ ແລະ ການແຍກ ຂອງບັນດາອົງການຈັດຕັ້ງ

- ການສ້າງຕັ້ງໃໝ່, ການລວມຕົວເຂົ້າກັນ, ການແຍກການຈັດຕັ້ງ, ການກຳນົດຂອບເຂດໜ້າທີ່ຮັບຜິດຊອບຂອງບັນດາຫົວໜ່ວຍບໍລິຫານ ຕ້ອງຄຳນຶງເຖິງຄວາມຮຽກຮ້ອງຕ້ອງການຂອງວຽກງານຕົວຈິງ, ຮັບປະກັນປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຕ້ອງມີການປະຢັດ ແລະ ຕ້ານການຟູມເຟືອຍ.

- ທຸກຂໍ້ຕົກລົງ ກ່ຽວກັບການສ້າງຕັ້ງໃໝ່, ການລວມຕົວ, ການແບ່ງ, ການແຍກອົງການຈັດຕັ້ງທີ່ຂັດກັບຂໍ້ກຳນົດທີ່ກຳລັງປະກາດໃຊ້ ແມ່ນໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງອອກຂໍ້ຕົກລົງລົບລ້າງ ແລະ ຢຸດຕິທັນທີ; ພ້ອມກັນນັ້ນ, ກະຊວງການເງິນ ແລະ ພະແນກການເງິນແຂວງ, ນະຄອນຫຼວງ ຕ້ອງສັ່ງໂຈະ ການອະນຸມັດສັ່ງຈ່າຍຂອງງົບປະມານ ເພື່ອປະຕິບັດບັນດາຂໍ້ຕົກລົງດັ່ງກ່າວຂ້າງເທິງນັ້ນ.

- ການແບ່ງ, ສັບຊ້ອນອົງການຈັດຕັ້ງຄືນໃໝ່ ຈະບໍ່ອະນຸຍາດໃຫ້ເພີ່ມຈຳນວນໂກຕ້າພະນັກງານຕື່ມ; ແຕ່ໃນກໍລະນີທາກມີຄວາມຈຳເປັນໃນການສັບຊ້ອນອົງການຈັດຕັ້ງຄືນໃໝ່ ແລະ ຕ້ອງການໃຫ້ເພີ່ມຈຳນວນໂຄຕ້າພະນັກງານເຂົ້າຕື່ມ, ຈຳນວນພະນັກງານໃໝ່ທີ່ຕ້ອງການເພີ່ມນັ້ນ ຕ້ອງໄດ້ຮັບອະນຸຍາດຈາກທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນສາກ່ອນ.

**ມາດຕາ 4. ການຈັດຊື້, ການປະກອບພາຫານະ, ອຸປະກອນ ແລະ ຊັບສິນບັດອື່ນໆໃຫ້ບັນດາອົງການຈັດຕັ້ງ.**

ການຈັດຊື້, ການປະກອບພາຫະນະ ອຸປະກອນ ແລະ ຊັບສິນບັດອື່ນໆ ໃຫ້ບັນດາອົງການຈັດຕັ້ງຈະຕ້ອງປະຕິບັດ ຄືດັ່ງລຸ່ມນີ້:

4.1. ການຈັດຊື້, ການປະກອບອຸປະກອນເຄື່ອງໃຊ້ຫ້ອງການ ໃຫ້ແຕ່ລະອົງການຈັດຕັ້ງ ແມ່ນໃຫ້ປະຕິບັດຕາມດຳລັດສະບັບເລກທີ 03/ນຍ ລົງວັນທີ 09/01/2004 ວ່າດ້ວຍ ການປະມູນ-ຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ຢ່າງເຂັ້ມງວດ.

4.2. ລາຄາທີ່ເປັນບ່ອນອີງ ເພື່ອກວດກາກ່ອນຈ່າຍງົບປະມານ ແມ່ນເອົາຕາມລາຄາສະເລ່ຍຂອງສິນຄ້າໃນຕະຫຼາດໃນມື້ຈັດຊື້ນັ້ນ.

4.3. ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການທີ່ໄດ້ຊື້ ຕ້ອງແມ່ນຜະລິດຕະພັນທີ່ຜະລິດຢູ່ພາຍໃນປະເທດ ຍົກເວັ້ນໃນກໍລະນີ ດັ່ງລຸ່ມນີ້:

- ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ ທີ່ພາຍໃນປະເທດ ຍັງບໍ່ທັນຜະລິດໄດ້.
- ອຸປະກອນທີ່ຜະລິດຢູ່ພາຍໃນປະເທດ ເມື່ອປຽບທຽບກັບອຸປະກອນ ທີ່ຜະລິດຢູ່ຕ່າງປະເທດ ແລ້ວມີຄຸນນະພາບຄືກັນ, ຊະນິດດຽວກັນ ແລະ ລະດັບການໃຊ້ງານຄືກັນ ແຕ່ອຸປະກອນທີ່ຜະລິດຢູ່ພາຍໃນປະເທດ ພັດມີລາຄາທີ່ສູງກ່ວາ. ກະຊວງການເງິນຈະເປັນຜູ້ກຳນົດ ກຳນົດໝາຍການນຳໃຊ້ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການໃຫ້ເໝາະສົມກັບສະພາບ ການຕົວຈິງໃນແຕ່ລະໄລຍະ.
- ອຸປະກອນທີ່ຜະລິດຢູ່ພາຍໃນປະເທດ ມີລາຄາເທົ່າທຽບກັບອຸປະກອນທີ່ຜະລິດຢູ່ຕ່າງປະເທດ, ຊະນິດດຽວກັນ ແຕ່ຄຸນນະພາບ ແລະ ການໃຊ້ງານຕ່ຳກວ່າມາດຕະຖານ.

4.4. ການຈັດຊື້ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການທີ່ຕ້ອງໄດ້ປະມູນ ແມ່ນຕ້ອງປະຕິບັດຕາມລະບຽບການປະມູນ ແລະ ລະບຽບການໃຊ້ຈ່າຍງົບປະມານຂອງລັດທີ່ກະຊວງການເງິນໄດ້ກຳນົດໄວ້.

**ມາດຕາ 5. ການນຳໃຊ້ພາຫະນະຂອງລັດ**

5.1. ພາຫານະທີ່ຮັບໃຊ້ວຽກງານລວມຂອງບັນດາອົງການບໍລິຫານ ວິຊາການ ແລະ ລັດວິສາຫະກິດແມ່ນຕ້ອງຄຸ້ມຄອງ ແລະ ນຳໃຊ້ໃຫ້ຖືກຕ້ອງຕາມດຳລັດສະບັບເລກທີ 81/ນຍ ວ່າດ້ວຍການປະກອບ ແລະ ຄຸ້ມຄອງລົດປະຈຳຕຳແໜ່ງການນຳ ແລະ ຂໍ້ກຳນົດຂອງກະຊວງການເງິນ ສະບັບເລກທີ 2397/ກງ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານແຫ່ງລັດ.

5.2. ອົງການລັດບໍລິຫານ, ວິຊາການ ແລະ ລັດວິສາຫະກິດ ທີ່ລັດຖະບານມອບສິດໃຫ້ຄຸ້ມຄອງ ແລະ ນຳໃຊ້ລົດນັ້ນ, ຖ້າບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ແມ່ນຫ້າມເດັດຂາດບໍ່ໃຫ້:

- ຂາຍ, ແລກປ່ຽນ, ມອບເປັນຂອງຂວັນ ໃຫ້ແກ່ບັນດາອົງການຈັດຕັ້ງ ແລະ ບຸກຄົນອື່ນ.
- ສຳລັບລົດບໍລິຫານ (ລົດຮັບໃຊ້ຂັ້ນກົມ, ຂັ້ນພະແນກຢູ່ທ້ອງຖິ່ນ) ແມ່ນມອບໃຫ້ແຕ່ລະກົມ ແລະ ພະແນກການຢູ່ແຕ່ລະທ້ອງຖິ່ນຈັດວາງເອົາເອງຕາມຄວາມຮັບຜິດຊອບ, ຕາມບໍລິມາດວຽກງານ ແລະ ຕາມງົບປະມານ (ນ້ຳມັນ ແລະ ຄ່າສ້ອມແປງ) ທີ່ກະຊວງ, ອົງການ ແລະ ທ້ອງຖິ່ນມອບເໝົາໃຫ້.

## ມາດຕາ 6. ການນຳໃຊ້ອຸປະກອນສື່ສານ

**6.1.** ການປະກອບ ແລະ ນຳໃຊ້ອຸປະກອນສື່ສານ ຢູ່ແຕ່ລະສຳນັກງານອົງການ ແລະ ເຮືອນພັກສ່ວນຕົວຂອງພະນັກງານ-ລັດຖະກອນ ຈະຕ້ອງປະຕິບັດໃຫ້ຖືກຕ້ອງຕາມຂໍ້ກຳນົດຂອງກະຊວງການເງິນ ສະບັບເລກທີ 2397/ກງ ວ່າດວ້ຍກຳນົດໝາຍການໃຊ້ຈ່າຍງົບປະມານແຫ່ງລັດ ແລະ ຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງການເງິນ ວ່າດວ້ຍການນຳໃຊ້ໂທລະສັບ ລະບົບວຽກງານບໍລິຫານຂອງລັດ ສະບັບເລກທີ 2106/ກງ ລົງວັນທີ 08/10/2004.

**6.2.** ອຸປະກອນສື່ສານທີ່ປະກອບໃສ່ ສຳນັກງານອົງການຈະຕ້ອງນຳໃຊ້ໃຫ້ຖືກຕ້ອງ ເພື່ອຈຸດປະສົງຂອງວຽກງານລວມເທົ່ານັ້ນ; ຖ້າຫາກມີການນຳໃຊ້ເຂົ້າໃນວຽກງານສ່ວນຕົວ ຜູ້ທີ່ນຳໃຊ້ນັ້ນຈະຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດດ້ວຍຕົນເອງ.

## ມາດຕາ 7. ການສົ່ງພະນັກງານລັດຖະກອນໄປປະຕິບັດໜ້າທີ່ວຽກງານຢູ່ທ້ອງຖິ່ນ

7.1. ການສົ່ງພະນັກງານລັດຖະກອນ ໄປປະຕິບັດໜ້າທີ່ວຽກງານຢູ່ທ້ອງຖິ່ນ ຮາກຖານ ຕ້ອງມີແຜນການລະອຽດ, ຖືກຕ້ອງຕາມຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ, ຮັບປະກັນປະສິດທິຜົນ ແລະ ຕ້ອງມີການກຳນົດຈຳນວນພະນັກງານ, ກຳນົດເວລາເຮັດວຽກ, ການຢັ້ງຢືນຮັບຮູ້ຈາກບ່ອນ ທີ່ພະນັກງານລົງໄປເຮັດວຽກ.

7.2. ລາຍຈ່າຍຄ່າເດີນທາງ, ຄ່າກິນ, ຄ່າພັກເຊົາ ໃນເວລາໄປປະຕິບັດໜ້າທີ່ວຽກງານ ຕ້ອງປະຕິບັດໃຫ້ຖືກຕ້ອງ ຕາມຂໍ້ກຳນົດຂອງກະຊວງການເງິນ ສະບັບເລກທີ 2397/ກງ ວ່າດວ້ຍກຳນົດໝາຍການໃຊ້ຈ່າຍງົບປະມານແຫ່ງລັດ ແລະ ຕ້ອງນອນໃນແຜນງົບປະມານທີ່ໄດ້ຮັບອະນຸມັດ. ບຸກຄົນທີ່ຖືກແຕ່ງຕັ້ງລົງໄປເຮັດວຽກ ແຕ່ບໍ່ໄປເຖິງສະຖານທີ່ເຮັດວຽກ, ບໍ່ປະຕິບັດບັນດາວຽກງານທີ່ມອບໝາຍໃຫ້ ຈະຕ້ອງຮັບຜິດຊອບທຸກຄ່າໃຊ້ຈ່າຍ. ໃນກໍລະນີມີການປອມແປງໃບບິນ ເພື່ອຊຳລະເອົາເງິນ ແມ່ນຈະຖືກລົງວິໄນ ແລະ ໃຊ້ຄືນຈຳນວນເງິນທີ່ໄດ້ຮັບໄປ.

## ມາດຕາ 8. ການຈັດກອງປະຊຸມ

ລາຍຈ່າຍໃນການຈັດກອງປະຊຸມຕ່າງໆ ຈະຕ້ອງຮັບປະກັນໃຫ້ມີການປະຢັດ ແລະ ຕ້ານການຟູມເຟືອຍ ໂດຍປະຕິບັດຕາມລະບຽບຫລັກການດັ່ງລຸ່ມນີ້:

8.1 ການຈັດຕັ້ງກອງປະຊຸມ ຕ້ອງໄດ້ເອົາເຂົ້າໃນແຜນການດຳເນີນງານປະຈຳປີ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ, ຮັບປະກັນໃຫ້ມີການປະຢັດ ທັງເວລາ ແລະ ຄ່າໃຊ້ຈ່າຍ ຂອງລັດຖະບານ.

8.2. ການໃຊ້ຈ່າຍໃນການຈັດຕັ້ງກອງປະຊຸມ ຕ້ອງໃຫ້ມີຄວາມຖືກຕ້ອງຕາມຂໍ້ກຳນົດສະບັບເລກທີ 2397/ກງ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານແຫ່ງລັດ ແລະ ແຜນງົບປະມານທີ່ໄດ້ອະນຸມັດ.

## ມາດຕາ 9. ການຮັບແຂກ ແລະ ງານບຸນຕ່າງໆ

ການໃຊ້ຈ່າຍໃນການຮັບແຂກ ແລະ ການຈັດງານບຸນຕ່າງໆ ຕ້ອງປະຕິບັດຕາມລະບຽບຫຼັກການດັ່ງລຸ່ມນີ້:

9.1. ບັນດາຮ່ອງລາຍຈ່າຍຕ້ອນຮັບແຂກ, ການຈັດງານບຸນປີໃໝ່ ແລະ ງານບຸນປະເພນີຕ່າງໆ ຕ້ອງນອນຢູ່ໃນແຜນງົບປະມານທີ່ໄດ້ອະນຸມັດໃນແຕ່ລະປີ.

9.2. ຫ້າມບໍ່ໃຫ້ນຳໃຊ້ເຫຼົ້າ, ເບຍ, ຢາສູບ ເພື່ອຮັບແຂກ (ຍົກເວັ້ນໃນກໍລະນີຕ້ອນຮັບແຂກຕ່າງປະເທດທີ່ມີຂໍ້ກຳນົດສະເພາະ).

9.3. ການນຳໃຊ້ງົບປະມານຂອງລັດເພື່ອຕ້ອນຮັບແຂກ, ຊື້ຂອງຂວັນໃຫ້ແຂກພາຍໃນ ແລະ ຕ່າງປະເທດ ຕ້ອງສົ່ງເສີມຜະລິດຕະພັນພາຍໃນເປັນຕົ້ນຕໍ ແລະ ປະຕິບັດຕາມຂໍ້ກຳນົດສະບັບເລກທີ 2397/ກງ ວ່າດວ້ຍກຳນົດໝາຍການໃຊ້ຈ່າຍງົບປະມານແຫ່ງລັດ.

## ມາດຕາ 10. ການສະເຫຼີມສະຫຼອງວັນບຸນປະຫວັດສາດ ແລະ ວັນສຳຄັນຂອງຊາດ

ການຈັດຕັ້ງລະນຶກວັນຊາດ, ວັນສ້າງຕັ້ງຂະແໜງການ, ວັນບຸນປະຫວັດສາດ ແລະ ວັນສຳຄັນອື່ນໆ ຕ້ອງຢູ່ບົນຈິດໃຈປະຢັດມັດທະຍັດ, ມີເນື້ອໃນ ແລະ ຄວາມໝາຍ; ບໍ່ໃຫ້ມີການຈັດຕັ້ງການສະແດງ, ການວາງສະແດງ ໂດຍນຳໃຊ້ງົບປະມານຂອງລັດ.

ການຈັດຕັ້ງລະນຶກວັນສ້າງຕັ້ງຂະແໜງການທົ່ວປະເທດ ຫຼື ທົ່ວແຂວງ ແມ່ນໃຫ້ຈັດຕັ້ງຕາມຮອບ 5 ປີ ໃຫ້ຈັດຕັ້ງເທື່ອໜຶ່ງ; ຖ້າຫາກວ່າມີຄວາມຈຳເປັນຕ້ອງໄດ້ຈັດຫຼາຍກວ່າໜຶ່ງເທື່ອ, ຕ້ອງໄດ້ຮັບການຕົກລົງເຫັນດີຈາກນາຍົກລັດຖະມົນຕີສາກ່ອນ.

ກະຊວງການເງິນເປັນຜູ້ສ້າງ ແລະ ປະກາດໃຊ້ກຳນົດໝາຍ, ມາດຕະຖານ ແລະ ລະບຽບການໃຊ້ຈ່າຍໃນການຈັດຕັ້ງລະນຶກວັນສ້າງຕັ້ງຂະແໜງການ.

## ມາດຕາ 11. ການຈັດຕັ້ງພິທີທາງລັດຖະການ

ການຈັດພິທີການຕ່າງໆທາງລັດຖະການ ແມ່ນຕ້ອງປະຕິບັດຕາມລະບຽບ ດັ່ງລຸມນີ້:

- ພິທີຕ້ອນຮັບທາງການຂອງອົງການຈັດຕັ້ງທຸກຂັ້ນ ຕ້ອງໃຫ້ກະທັດລັດ, ປະຢັດ ແຕ່ຕ້ອງໃຫ້ຮັບປະກັນເນື້ອໃນຕາມແຕ່ລະເປົ້າໝາຍ.

- ພິທີມອບ-ຮັບການຍ້ອງຍໍ, ຫຼຽນກາ, ຫຼຽນໄຊ ຕ້ອງສົມທົບເຂົ້າໃນໂອກາດຈັດຕັ້ງວັນບຸນ, ວັນລະນຶກ ຫຼື ກອງປະຊຸມຂອງອົງການຈັດຕັ້ງ ແລະ ໜ່ວຍງານ, ແຕ່ຕ້ອງໃຫ້ກະທັດລັດ, ປະຢັດ, ມີເນື້ອໃນ ແລະ ຄວາມໝາຍ.

- ຫ້າມບໍ່ໃຫ້ນຳໃຊ້ຄັງລວມ, ເງິນງົບປະມານແຫ່ງລັດ ເພື່ອຈັດງານລ້ຽງແຂກທີ່ເຂົ້າຮ່ວມໃນພິທີທາງລັດຖະການດັ່ງກ່າວຢ່າງເດັດຂາດ.

## ມາດຕາ 12. ການອະນຸມັດການລົງທຶນ

- ການອະນຸມັດແຜນການລົງທຶນ ແລະ ການຈັດແບ່ງເງິນລົງທຶນໃຫ້ໂຄງການຕ່າງໆ ຕ້ອງຮັບປະກັນປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ, ຖືກຕ້ອງຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຕ້ອງປະຕິບັດຢ່າງເຂັ້ມງວດ ຕາມດຳລັດສະບັບເລກທີ 58/ນຍ ວ່າດ້ວຍການຄຸ້ມຄອງການລົງທຶນຂອງລັດ.

- ຖ້າກວດກາເຫັນວ່າ ການລົງທຶນບໍ່ນອນຢູ່ໃນແຜນ, ບໍ່ຖືກຕ້ອງຕາມຫຼັກການໃນການສ້າງ ແລະການປະເມີນຜົນໂຄງການ ຕ້ອງໃຫ້ຢຸດຕິໂດຍທັນທີ ແລະ ແກ້ໄຂຕາມລະບຽບກົດໝາຍ.

## ມາດຕາ 13. ການປະເມີນມູນຄ່າ ແລະ ການປະມູນໂຄງການ

- ການວິເຄາະ ແລະ ປະເມີນມູນຄ່າຂອງໂຄງການ ຕ້ອງປະຕິບັດຕາມມາດຖານ, ກຳນົດໝາຍເສດຖະກິດ-ເຕັກນິກ, ສັງຄົມ, ສິ່ງແວດລ້ອມ, ການເງິນ ແລະ ການກໍ່ສ້າງ ຊຶ່ງອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດໄດ້ກຳນົດ.

- ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງຄົ້ນຄ້ວາ ແລະ ປະກາດໃຊ້ລະບຽບການ ກ່ຽວກັບການກຳນົດລາຄາຫົວໜ່ວຍການກໍ່ສ້າງປະເພດຕ່າງໆ.

- ການປະມູນໂຄງການ ຕ້ອງປະຕິບັດຕາມລະບຽບການປະມູນ ແລະ ການຈັດຊື້ຕາມທີ່ໄດ້ກຳນົດໄວ້ໃນດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 03/ນຍ ຢ່າງເຂັ້ມງວດ.

- ຜູ້ອະນຸມັດແຜນງົບປະມານໂຄງການ ຫຼື ຮັບຮອງເອົາຜົນການປະມູນທີ່ບໍ່ຖືກຕ້ອງຕາມເນື້ອໃນຂອງດຳລັດສະບັບເລກທີ 03/ນຍ ຈະຕ້ອງຮັບຜິດຊອບຕໍ່ລະບຽບກົດໝາຍ.

## ມາດຕາ 14. ການຈັດຕັ້ງປະຕິບັດໂຄງການ

ການຈັດຕັ້ງປະຕິບັດໂຄງການລົງທຶນຕ້ອງຮັບປະກັນໃຫ້ຖືກຕ້ອງ ກັບການອອກແບບທາງດ້ານເຕັກນິກ, ຖືກຕາມບາດກ້າວ, ແຜນງົບປະມານ ແລະ ລາຄາທີ່ໄດ້ຮັບການປະມູນແລ້ວ; ຫ້າມບໍ່ໃຫ້ຜູ້ຮັບເໝົາໂຄງການແກ່ຍາວເວລາໃນການປະຕິບັດ, ດຳເນີນງານບໍ່ຖືກກັບການອອກແບບທາງດ້ານເຕັກນິກ, ນຳໃຊ້ວັດຖຸດິບ ແລະ ອຸປະກອນຕ່າງໆ ບໍ່ຖືກຕ້ອງຕາມມາດຕະຖານ, ຄຸນນະພາບ ແລະເຕັກນິກ ຊຶ່ງເປັນສາເຫດເຮັດໃຫ້ມີການຫຼຸດຄຸນນະພາບຂອງໂຄງການ ແລະ ມີການຟູມເຟືອຍ, ຜູ້ກ່ຽວຈະຕ້ອງຮັບຜິດຊອບຕໍ່ລະບຽບກົດໝາຍ.

## ມາດຕາ 15. ການເບີກຈ່າຍງົບປະມານສຳລັບໂຄງການ

- ຜູ້ຮັບຜິດຊອບໂຄງການ ກ່ອນຈະເບີກຈ່າຍງົບປະມານ ຕ້ອງໄດ້ກວດກາໜ້າວຽກທີ່ໄດ້ເຮັດສຳເລັດຕົວຈິງ ເພື່ອຮັບປະກັນຄວາມຖືກຕ້ອງຕາມເຕັກນິກຕ່າງໆ ທີ່ໄດ້ກຳນົດໄວ້ ແລະ ສອດຄ່ອງກັບເງື່ອນໄຂການເບີກຈ່າຍຂອງສັນຍາ ໂດຍໃຫ້ມີຄະນະກຳມະການເປັນຜູ້ກວດກາ ແລະ ຢັ້ງຢືນຄັກແນ່.

- ຫາກມີການເບີກຈ່າຍເກີນກວ່າໜ້າວຽກທີ່ສຳເລັດຕົວຈິງ, ເກີນກວ່າແຜນງົບປະມານ ແລະ ມູນຄ່າທີ່ປະມູນໄວ້, ຜູ້ຮັບຜິດຊອບໂຄງການຈະຕ້ອງຮັບຜິດຊອບຕໍ່ລະບຽບກົດໝາຍ.

## ມາດຕາ 16. ການນຳໃຊ້ທີ່ດິນ

- ການສ້າງແຜນການນຳໃຊ້ທີ່ດິນ, ການອອກຂໍ້ຕົກລົງມອບສິດນຳໃຊ້ທີ່ດິນ, ການໃຫ້ເຊົ່າທີ່ດິນແກ່ອົງການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍທີ່ດິນ.
- ຕອນດິນໃດທີ່ໄດ້ຮັບມອບສິດນຳໃຊ້, ໃຫ້ເຊົ່າ, ໃຫ້ສຳປະທານ ຢ່າງບໍ່ຖືກຕ້ອງຕາມສັນຍາ, ຕາມຈຸດປະສົງ, ເກີນກຳນົດໝາຍ, ມາດຕະຖານ ແລະ ລະບຽບການທີ່ກຳນົດໄວ້ ກໍ່ຈະຖືກປະຕິບັດຕາມລະບຽບກົດໝາຍ ຫຼື ຖືກຖອນສິດ.

## ມາດຕາ 17. ການນຳໃຊ້ສຳນັກງານ, ເຮືອນລັດ ແລະ ບັນດາສະຖາປະຕິມະກຳສະຖານອື່ນໆ

- ສຳນັກງານ, ເຮືອນລັດ ແລະ ບັນດາສະຖາປະຕິມະກຳສະຖານອື່ນໆ ຕ້ອງໃຫ້ນຳໃຊ້ຢ່າງຖືກຕ້ອງຕາມກຳນົດໝາຍ, ມາດຕະຖານ, ລະບຽບການ ທີ່ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງໄດ້ກຳນົດໄວ້; ຖ້າມີການນຳໃຊ້ເກີນກຳນົດໝາຍ ຈະໄດ້ຈັດວາງ ແລະ ດັດສົມຄືນໃຫ້ເໝາະສົມ. ສຳນັກງານ, ເຮືອນລວມ ຖ້າບໍ່ໄດ້ຖືກນຳໃຊ້ ກໍ່ຈະຖືກຖອນສິດ.

- ຫ້າມບໍ່ໃຫ້ປ່ຽນສຳນັກງານ, ອົງການຂອງລັດ ເປັນບ່ອນທຳການທຸລະກິດ, ເອົາໃຫ້ເຊົ່າ, ບໍລິການ, ເຮັດເຮືອນຢູ່ ຫຼື ນຳໃຊ້ໃນຈຸດປະສົງອື່ນໆ ທີ່ຜິດກັບລະບຽບກົດໝາຍທີ່ໄດ້ກຳນົດໄວ້ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດອຳນາດ.

- ອົງການຈັດຕັ້ງ ແລະ ນິຕິບຸກຄົນ ທີ່ລະເມີດລະບຽບກ່ຽວກັບການຄຸ້ມຄອງ, ນຳໃຊ້ສຳນັກງານ, ເຮືອນລັດ ແລະ ບັນດາສະຖາປະຕິມະກຳສະຖານອື່ນໆ ຈະຖືກຕັດສິນລົງໂທດຕາມລະບຽບກົດໝາຍ. ສ່ວນລາຍຮັບທີ່ໄດ້ຈາກການນຳໃຊ້ຊັບສິນບັດທີ່ຜິດກັບລະບຽບກົດໝາຍນັ້ນ ແມ່ນຕ້ອງເອົາເຂົ້າງົບປະມານທັງໝົດ.

- ອາຄານ ຫຼື ເຮືອນຂອງລັດ ລວມທັງທີ່ດິນບ່ອນປຸກສ້າງ ທີ່ລັດໄດ້ມອບໃຫ້ບຸກຄົນອາໄສຢູ່ນັ້ນ ຈະຕ້ອງໄດ້ຮັບການແກ້ໄຂດ້ວຍຮູບການຫັນເປັນກຳມະສິດໃຫ້ ຫຼື ໃຫ້ເຊົ່າ ຕາມເງື່ອນໄຂ ແລະ ຄວາມເໝາະສົມຂອງແຕ່ລະເປົ້າໝາຍ.

**ມາດຕາ 18. ການຄຸ້ມຄອງ, ການຂຸດຄົ້ນຊັບພະຍາກອນທຳມະຊາດ**

ການຄຸ້ມຄອງ, ຂຸດຄົ້ນຊັບພະຍາກອນທຳມະຊາດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ. ອົງການຈັດຕັ້ງລັດທີ່ມີສິດອຳນາດ ຕ້ອງຕິດຕາມກວດກາຢ່າງເປັນປົກກະຕິ ແລະ ມີຄວາມຮັບຜິດຊອບສູງ, ຄວບຄຸມການປະຕິບັດຕາມສັນຍາ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ ແລະ ສາມາດອອກຄຳສັ່ງໃຫ້ຢຸດຕິໃນກໍລະນີມີການສຳຫຼວດ, ຂຸດຄົ້ນ, ນຳໃຊ້ ຊັບພະຍາກອນທຳມະຊາດທີ່ຜິດກັບລະບຽບກົດໝາຍ, ກໍ່ໃຫ້ເກີດການຫຼູ່ມເຟືອຍ ແລະ ການທຳລາຍສິ່ງແວດລ້ອມ.

**ມາດຕາ 19. ລະບຽບການໃຊ້ຈ່າຍງົບປະມານຂອງລັດວິສາຫະກິດ**

19.1. ລັດວິສາຫາກິດ ມີໜ້າທີ່ປະຕິບັດໃຫ້ຖືກຕ້ອງຕາມລະບຽບການເງິນ ໃນການຄຸ້ມຄອງ ແລະ ການນຳໃຊ້ທຶນ, ຊັບສິນ, ການຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງລັດວິສາຫະກິດ ເປັນຕົ້ນແມ່ນລະບຽບການເປີດເຜີຍຖານະການເງິນຂອງຕົນ ແລະ ປະຕິບັດລະບອບການຖືບັນຊີ, ການລາຍງານຕາມກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 55/ສພຊ ລົງວັນທີ 09 ກັນຍາ 2005.

19.2. ລັດວິສາຫະກິດຕ້ອງປະຕິບັດການໃຊ້ຈ່າຍ ໂດຍອີງໃສ່ກຳນົດໝາຍ, ມາດຕະຖານ ແລະ ລະບຽບການ- ການໃຊ້ຈ່າຍທີ່ກະຊວງການເງິນວາງອອກ, ຕ້ອງຜັນຂະຫຍາຍ ລະບຽບການດັ່ງກ່າວ ເຂົ້າສູ່ການເຄື່ອນໄຫວຂອງຕົນເອງຢ່າງເໝາະສົມ ເຊັ່ນ: ຄ່າໃຊ້ຈ່າຍເພື່ອຕ້ອນຮັບແຂກ, ການຈັດປະຊຸມ, ການເດີນທາງ ແລະ ລາຍຈ່າຍອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 20. ການໃຊ້ຈ່າຍຄ່າເງິນເດືອນຂອງລັດວິສາຫະກິດ**

ລັດວິສາຫະກິດ ຕ້ອງປະຕິບັດລະບອບເງິນເດືອນ ແລະ ລະບຽບການແບ່ງປັນລາຍຮັບ ໃຫ້ຖືກຕ້ອງຕາມກົດໝາຍວິສາຫະກິດ. ຜູ້ທີ່ອອກຂໍ້ຕົກລົງຮັບເອົາພະນັກງານ, ເບີກຈ່າຍເງິນເດືອນ ແລະ ແບ່ງປັນ ລາຍຮັບ ທີ່ບໍ່ຖືກຕ້ອງຕາມລະບຽບການ ຕ້ອງຮັບຜິດຊອບຕາມລະບຽບກົດໝາຍ.

**ມາດຕາ 21. ການຈັດຊື້ພາຫະນະ, ອຸປະກອນຂອງລັດວິສາຫະກິດ.**

21.1. ການຈັດຊື້ ແລະ ນຳໃຊ້ພາຫະນະ, ອຸປະກອນ, ຊັບສິນອື່ນໆ ທີ່ຮັບໃຊ້ວຽກງານຄຸ້ມຄອງບໍລິຫານທຸລະກິດຂອງລັດວິສາຫະກິດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກຳນົດໝາຍ, ມາດຕະຖານ ແລະ ລະບຽບການທີ່ກະຊວງການເງິນໄດ້ກຳນົດໄວ້.

ໃນກໍລະນີມີການຊື້ ແລະ ປະກອບພາຫະນະ ແລະ ອຸປະກອນ ເກີນກຳນົດໝາຍ, ມາດຕະຖານ ແລະ ບໍ່ສອດຄ່ອງກັບລະບຽບການ, ຜູ້ຮັບຜິດຊອບຈະຕ້ອງຖືກປະຕິບັດວິໄນ ຕາມລະບຽບການກຳນົດ.

21.2. ຜູ້ອຳນວຍການ ຫຼື ຜູ້ທີ່ໄດ້ຮັບມອບສິດ ອອກຂໍ້ຕົກລົງຈັດຊື້ພາຫະນະຮັບໃຊ້ວຽກງານຄຸ້ມຄອງບໍລິຫານທຸລະກິດຂອງວິສາຫະກິດ ຫາກປະຕິບັດບໍ່ຖືກຕ້ອງຕາມຂໍ້ກຳນົດ ຊຶ່ງກໍ່ໃຫ້ເກີດມີການຫຼູ່ມເຟືອຍ ແລະ ເສຍຫາຍ ແມ່ນຕ້ອງໄດ້ທົດແທນຄືນ ແລະ ຈະຖືກປະຕິບັດວິໄນຕາມລະບຽບການກຳນົດ.

**ມາດຕາ 22. ການນຳໃຊ້ລົດຕ່າງໆຂອງວິສາຫະກິດ.**

ການສ້າງຕັ້ງ ແລະ ການນຳໃຊ້ບັນດາລັງຂອງວິສາຫະກິດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 55/ສພຊ ລົງວັນທີ 09/11/2005. ຫ້າມບໍ່ໃຫ້ສ້າງຕັ້ງລັງທີ່ຂັດກັບລະບຽບການທີ່ໄດ້ກຳນົດໄວ້. ໃນກໍລະນີກວດພົບລັງທີ່ຂັດກັບລະບຽບກົດໝາຍ ແມ່ນໃຫ້ມອບຄືນເຂົ້າງົບປະມານແຫ່ງລັດທັງໝົດ. ສ່ວນຜູ້ທີ່ອອກຂໍ້ຕົກລົງສ້າງຕັ້ງລັງທີ່ຂັດກັບລະບຽບການນັ້ນ ແມ່ນຈະຖືກປະຕິບັດວິໄນ ແລະ ລົງໂທດຕາມລະບຽບກົດໝາຍ.

## ໝວດທີ III
## ການປະຢັດ ແລະ ຕ້ານການຟູມເຟືອຍ ໃນການຊົມໃຊ້ຂອງປະຊາຊົນ

**ມາດຕາ23. ການເຄື່ອນໄຫວດ້ານວັດທະນະທຳ, ງານບຸນປະເພນີຕ່າງໆ.**

23.1. ການໃຊ້ຈ່າຍສຳລັບຄອບຄົວ ເຊັ່ນ: ຄ່າໃຊ້ຈ່າຍສຳລັບການກິນຢູ່, ການໃຊ້ນ້ຳມັນ, ໄຟຟ້າ, ນ້ຳປະປາ, ລົດລາງພາຫະນະອື່ນໆຂອງປະຊາຊົນ, ຕ້ອງໃຫ້ມີການປະຢັດ ເພື່ອເປັນການຂະຫຍາຍການສະສົມ ແລະ ທ້ອນໂຮມເງິນໃນສັງຄົມ, ບັນດາສື່ມວນຊົນ ເຊັ່ນ: ໜັງສືພິມ, ວິທະຍຸ, ໂທລະພາບ ຕ້ອງເອົາໃຈໃສ່ໂຄສະນາສຶກສາອົບຮົມ ເພື່ອປູກຈິດສຳນຶກການປະຢັດໃນສັງຄົມຢ່າງຕັ້ງໜ້າ.

23.2. ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ສົມທົບກັບສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ສ້າງຮູບແບບຕົວຢ່າງ ກ່ຽວກັບການຈັດຕັ້ງພິທີງານບຸນຕ່າງໆ, ເຊັ່ນ: ງານແຕ່ງດອງ, ງານຊາປະນະກິດສົບ ແລະ ງານບຸນຮີດຄອງປະເພນີຕ່າງໆ ແລະ ບັນດາການເຄື່ອນໄຫວວັດທະນາທຳອື່ນໆ ໃຫ້ມີລັກສະນະປະຢັດ, ຮັບປະກັນເນື້ອໃນ ແລະ ຄວາມໝາຍຄົບຖ້ວນ, ທັງເປັນການອະນຸລັກຮີດຄອງປະເພນີ ແລະ ເອກະລັກວັດທະນະທຳອັນດີງາມຂອງຊາດ ແລະ ຂອງບັນດາເຜົ່າ. ໂດຍອີງໃສ່ຮູບແບບຕົວຢ່າງດັ່ງກ່າວ ແລະ ເງື່ອນໄຂຈຸດພິເສດ, ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ, ບັນດາອົງການຈັດຕັ້ງຂອງຂະແໜງການ ແລະ ທ້ອງຖິ່ນ ຕ້ອງເປັນເຈົ້າການປຸກລະດົມຂົນຂວາຍປະຊາຊົນບັນດາເຜົ່າ ໃນການຈັດຕັ້ງປະຕິບັດຕົວຈິງ.

**ມາດຕາ 24. ຄວາມເປັນແບບຢ່າງຂອງພະນັກງານ, ລັດຖະກອນໃນການປະຢັດ.**

ພະນັກງານການນຳ, ພະນັກງານ ແລະ ລັດຖະກອນທຸກຂັ້ນ ຕ້ອງເປັນແບບຢ່າງໃນການປະຕິບັດບັນດາຮູບແບບຕົວຢ່າງ ກ່ຽວກັບການຈັດຕັ້ງພິທີງານບຸນ, ງານແຕ່ງດອງ, ງານຊາປະນະກິດສົບ ແລະ ການເຄື່ອນໄຫວວັດທະນາທຳອື່ນໆ ທີ່ໄດ້ແນະນຳ ແລະ ເປັນເຈົ້າການປຸກລະດົມປະຊາຊົນເຂົ້າຮ່ວມປະຕິບັດຢ່າງເປັນຂະບວນ ໃນຂອບເຂດທົ່ວປະເທດ.

## ໝວດທີ IV
## ການຍ້ອງຍໍຕໍ່ຜູ້ທີ່ມີຜົນງານ ແລະ ການປະຕິບັດວິໄນຕໍ່ຜູ້ລະເມີດ

### ມາດຕາ 25. ການຍ້ອງຍໍຕໍ່ຜູ້ທີ່ມີຜົນງານ

- ອົງການຈັດຕັ້ງ ແລະ ບຸກຄົນ ທີ່ມີຜົນງານໃນການປະຕິບັດນະໂຍບາຍປະຢັດ ແລະ ຕ້ານການຟູມເຟືອຍ ຈະໄດ້ຮັບການຍ້ອງຍໍ ຢ່າງເໝາະສົມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.
- ຈຳນວນເງິນທີ່ໄດ້ມາຈາກການປະຢັດໃນບ້ວງເງິນລາຍຈ່າຍປົກກະຕິ ຂອງອົງການຈັດຕັ້ງທີ່ໄດ້ຮັບຈາກງົບປະມານແຫ່ງລັດ ຈະໄດ້ຮັບອະນຸຍາດໃຫ້ໂອນໄປຈ່າຍໃນຈຸດປະສົງອື່ນ ຕາມກົດໝາຍງົບປະມານແຫ່ງລັດໄດ້ກຳນົດ.
- ລັດຖະບານເປັນຜູ້ກຳນົດລະອຽດການມອບເໝົາລາຍຈ່າຍ ແລະ ກະຕຸກຊຸກຍູ້ທາງດ້ານວັດຖຸ ໃນກໍລະນີທີ່ມີການປະຢັດຄ່າໃຊ້ຈ່າຍງົບປະມານແຫ່ງລັດ.

### ມາດຕາ 26. ມາດຕະການຕໍ່ຜູ້ລະເມີດ

- ອົງການຈັດຕັ້ງ ຫຼື ບຸກຄົນທີ່ລະເມີດນະໂຍບາຍປະຢັດ ແລະ ຕ້ານການຟູມເຟືອຍ ຈະຖືກປະຕິບັດວິໄນ ຫຼື ຖືກລົງໂທດ ໂດຍອີງຕາມລັກສະນະ ແລະ ລະດັບຄວາມຜິດ.
- ຜູ້ທີ່ເຊື່ອງອຳປິດບັງ, ຂັດຂວາງການກວດກາຄົ້ນຫາຄວາມຜິດ, ຂາດຄວາມຮັບຜິດຊອບໃນວຽກງານກວດກາ ແລະ ມີພຶດຕິກຳຟູມເຟືອຍ ແລະ ມີພຶດຕິກຳເພື່ອແກ້ແຄ້ນ, ຂົ່ມຂູ່ຜູ້ຮ້ອງຟ້ອງກ່ຽວກັບການກະທຳຟຸມເຟືອຍຂອງຜູ້ກ່ຽວ ຈະຖືກລົງໂທດ ແລະ ດຳເນີນຄະດີຕາມລະບຽບກົດໝາຍໂດຍອີງຕາມລັກສະນະ ແລະ ລະດັບຄວາມຜິດ.

## ໝວດທີ V
## ບົດບັນຍັດສຸດທ້າຍ

### ມາດຕາ 27. ການຈັດຕັ້ງປະຕິບັດ

27.1. ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການອ້ອມຂ້າງລັດຖະບານ, ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ, ລັດວິສາຫະກິດ ແລະ ບັນດາອົງການຈັດຕັ້ງອື່ນໆ ທີ່ນຳໃຊ້ລາຍຈ່າຍຈາກງົບປະມານຂອງລັດ ມີໜ້າທີ່ຈັດຕັ້ງປະຕິບັດນະໂຍບາຍປະຢັດ ແລະ ຕ້ານການຟູມເຟືອຍຢ່າງເຂັ້ມງວດ; ຫົວໜ້າອົງການຈັດຕັ້ງທີ່ຖືກມອບໝາຍໃຫ້ຄຸ້ມຄອງ, ນຳໃຊ້ທຶນ ແລະ ຊັບສິນຂອງລັດ ມີໜ້າທີ່ໂດຍກົງປະຕິບັດນະໂຍບາຍປະຢັດ ແລະ ຕ້ານການຟູມເຟືອຍ; ບັນດາອົງການຈັດຕັ້ງທີ່ນຳໃຊ້ລາຍຈ່າຍງົບປະມານແຫ່ງລັດ, ຄຸ້ມຄອງ, ນຳໃຊ້ທຶນ ແລະ ຊັບສິນຂອງລັດ ມີໜ້າທີ່ສ້າງແຜນການ, ແຜນງານ ແລະ ມາດຕະການໃນການຈັດຕັ້ງປະຕິບັດ ນະໂຍບາຍປະຢັດ ແລະ ຕ້ານການຟູມເຟືອຍ ໃນໜ່ວຍງານຂອງຕົນ.

27.2. ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການອ້ອມຂ້າງລັດຖະບານ, ແຂວງ ແລະ ນະຄອນຫລວງອອກບົດແນະນຳລະອຽດ, ປະສານສົມທົບ ກັບແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນ, ປຸກລະດົມປະຊາຊົນປະຕິບັດນະໂຍບາຍການປະຢັດ ແລະ ຕ້ານການຟູມເຟືອຍທີ່ວາງອອກ ໃຫ້ໄດ້ຮັບຜົນເປັນຮູບປະທຳ.

27.3. ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ໂດຍສະເພາະບັນດາອົງການສື່ມວນຊົນ ມີໜ້າທີ່ເຜີຍແຜ່ໂຄສະນາ, ປຸກລະດົມປະຊາຊົນ ດ້ວຍຫຼາຍຮູບຫຼາຍສີ ໃນການຈັດຕັ້ງປະຕິບັດນະໂຍບາຍປະຢັດ ແລະ ຕ້ານການຟູມເຟືອຍ; ນຳສະເໜີຕົວແບບທີ່ດີ ໃນການຈັດຕັ້ງປະຕິບັດນນະໂຍບາຍປະຢັດ ແລະ ຕ້ານການຟູມເຟືອຍ ໃນການຈັດຕັ້ງງານບຸນ, ງານແຕ່ງດອງ, ງານຊາປະນະກິດສົບ ແລະ ບັນດາການເຄື່ອນໄຫວວັດທະນະທຳອື່ນໆ; ຊົມເຊີຍບຸກຄົນ, ການຈັດຕັ້ງທີ່ປະຕິບັດໄດ້ດີ ແລະ ຕຳໜິສິ່ງຂ່າວການກະທຳທີ່ກໍ່ໃຫ້ເກີດການຟູມເຟືອຍ ໃນຂົງເຂດການຜະລິດ ແລະ ການໃຊ້ສອຍ.

27.4. ມອບໃຫ້ບັນດາກະຊວງ ແລະ ອົງການທຽບເທົ່າກະຊວງ , ແຂວງ, ນະຄອນຫລວງ, ບັນດາພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 28. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ກຳນົດ, ຂໍ້ຕົກລົງ ແລະ ຄຳສັ່ງ ທີ່ປະກາດໃຊ້ໃນເມື່ອກ່ອນທີ່ມີເນື້ອໃນຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**